ບົດລາຍງານປະຈຳໄຕມາດ1 2017

The First Quarter Report



ສຸວັນນີ SOUVANNY Home Center

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ

SOUVANNY HOME CENTER PUBLIC COMPANY

Phontongsavat Rd, Chanthabuly District, Vientiane Capital, Lao PDR

OFFICE: (856-21) 415 645. FAX/TEL: (856-21) 262 984 Website:/www.souvanny.com



ສາຂາໂພນຕ້ອງ
ໂທ: 021 560000, 561111



ສາຂາສີໂຄ
ໂທ: 021 621254, 621255



ສາຂາໂຊກໃຫຍ່
ໂທ: 030 5096493



ສາຂາທົ່ງຂັນຄຳ
ໂທ: 021 212376, 254584



ສາຂາທົ່ງຕູມ
ໂທ: 021 265331, 265332

ລາຍລະອຽດ /Contents

- ປະຫວັດຄວາມເປັນມາຂອງ ສຸວັນນີ/ History of Souvanny
- ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປະຈຳໄຕມາດ 1 ປີ 2017 / Summary Business Operation of the first quarter report 2017
- ວຽກງານດ້ານການຕະຫຼາດ/ Marketing
- ວຽກງານດ້ານບຸກຄະລາກອນ/ Human Resource
- ວຽກງານດ້ານຍຸດທະສາດອົງກອນ/ Strategy of the Company

ສະພາບໍລິຫານຂອງ ສ.ວ.ນ / Board of Directors of SVN



ທ່ານ ອຸ່ນ ຫຼ້າສຸກັນ
Mr. Ounh LASOUKANH
ປະທານສະພາບໍລິຫານ/
ປະທານຄະນະກຳມະການກວດກາພາຍໃນ
Chairman/Chairman of Audit Committee



ທ່ານ ວັດດານາ ສຸຄະບັນດິດ
Mr. Waddana SOUKBANDITH
ຮອງສະພາບໍລິຫານ/ຜູ້ອຳນວຍການໃຫຍ່
Vice Chairman/CEO



ທ່ານ ພັນໂນລາ ສຸຄະບັນດິດ
Mr. Phannola SOUKBANDITH
ຜູ້ອຳນວຍການ ຮອງສະພາບໍລິຫານ/
ຮອງຜູ້ອຳນວຍການຝ່າຍການເງິນ
Vice chairman/CFO



ທ່ານ ກິດສະດາ ສຸຄະບັນດິດ
Mr. Kotsada SOUKBANDITH
ຮອງຜູ້ອຳນວຍການຝ່າຍປະຕິບັດການ
Director/COO



ທ່ານ ຄຳກົ່ງ ລ່ຽມພຣະຈັນ
Mr. Khamkong LIEMPHRACHANH
ຜູ້ອຳນວຍການ/ຄະນະກຳມະການກວດກາພາຍໃນ
Director/Audit Committee



ທ່ານ ປະດິດ ວົງເສນາ
Mr. Padith VONGSENA
ຜູ້ອຳນວຍການ/ຄະນະກຳມະການກວດກາພາຍໃນ
Director/Audit Committee



ທ່ານ ວິທູນ ສຸລິຍะอะนากุน
Mr. Witoon SURIYAWANAKUL
ຜູ້ອຳນວຍການ
Director



ທ່ານ ວะธิด จินตะนาวัน
Mr. Varith CHINTANAVANH
ຜູ້ອຳນວຍການ
Director



ທ່ານ ນาง ปะพัดสอน สุกะบันดิด
Mrs. Paphatsone SOUKBANDITH
ຜູ້ອຳນວຍການ
Director



ບົດລາຍງານປະຈຳໄຕມາດ 1 2017

- **ເປົ້າໝາຍຫຼັກຂອງການດຳເນີນທຸລະກິດ/ The Core Business Operation**
  - **ວິໄສທັດ/Vision**

ສ້າງຕົນເອງໃຫ້ເປັນບໍລິສັດຊັ້ນນຳໃນການຄ້າວັດສະດຸກໍ່ສ້າງ ແລະ ຕົກແຕ່ງເຮືອນທີ່ທັນສະໄໝໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ

  - **ພາລະກິດ/Mission**

ພັດທະນາດ້ານສິນຄ້າ ແລະ ບໍລິການໃຫ້ໄດ້ມາດຕະຖານ, ມີຄວາມທັນສະໄໝເພື່ອມຸ່ງໝັ້ນສູ່ຄວາມເປັນເລີດດ້ານບໍລິການ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ ຄວາມສາມາດ ໃນການຮັບມືກັບພາລະໜ້າທີ່ອັນໃໝ່ທີ່ໃຫຍ່ກວ່າເກົ່າ ຂະຫຍາຍທຸລະກິດໃຫ້ກະຈາຍໄປທົ່ວປະເທດ ເພື່ອຍາດແຍ່ງໂອກາດໃນການທີ່ເປັນຈຸດເຊື່ອມຕໍ່ທາງພາກພື້ນລະຫວ່າງ ສປ ຈີນ ແລະ ອາຊຽນ ປະກອບສ່ວນຢ່າງຕັ້ງໜ້າໃນການສ້າງສາພັດທະນາສັງຄົມ ແລະ ປະເທດຊາດ.

ປະຫວັດຄວາມເປັນມາຂອງ ສຸວັນນີ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍ ສິນຄ້າດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງ ວັດສະດຸຕົກແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົກແຕ່ງບ້ານ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນິເຈີ ພາຍໃຕ້ ການສິນຄ້າ Modernform ແລະ ຍັງເປັນຕົວແທນຈຳໜ່າຍ ພ້ອມໃຫ້ບໍລິການຕິດຕັ້ງ, ສ້ອມແປງຂັ້ນໄດເລື່ອນ ແລະ ລິບ ພາຍໃຕ້ ການສິນຄ້າ Mitsubishi ພຽງຜູ້ດຽວໃນ ສປປ ລາວ. ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າ ເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກ ແບບພາຍໃນຫ້ອງຄົວ-ຫ້ອງນ້ຳ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ຫຼາຍກວ່າ 400 ຍີ່ຫໍ້; ເຊິ່ງມີສິນຄ້າ ຫຼາຍກວ່າ 30,000 ລາຍການ ໂດຍມີລະບົບໂປຣແກຣມຄອມພິວເຕີທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນ 7 ກຸ່ມ 17 ປະເພດຜະລິດຕະພັນ ເພື່ອຕອບ ສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົກແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: “ຍົກລະດັບ ສິນຄ້າ ແລະ ບໍລິການໃຫ້ມີຄຸນະພາບ ສິ່ງມອບຖືກຕ້ອງ ຄົບວົງຈອນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ”. ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ “ສຸວັນນີ” (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ (ທ່ານ ນາງ ສຸວັນນີ), ທ່ານ ວັດດາ ນາ ສຸຄະບັນດິດ (ທ່ານ ວັດດານາ) ແລະ ທ່ານ ພັນໂນລາ ສຸຄະບັນດິດ (ທ່ານ ພັນໂນລາ), ເຊິ່ງໃນປັດຈຸບັນ ບໍລິສັດໄດ້ ມີສາຂາໃຫ້ບໍລິການລູກຄ້າທັງໝົດ 4 ສາຂາ ສະເພາະພາຍໃນນະຄອນຫຼວງວຽງຈັນ ໄດ້ແກ່: ສາຂາໂພນຕ້ອງ (ສຳນັກ ງານໃຫຍ່), ສາຂາທົ່ງຂັນຄຳ, ສາຂາສີໄຄ ແລະ ສາຂາທົ່ງຕູມ.

ປີ	ເຫດການສຳຄັນ
1988	➢ ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງ ສຸວັນນີ ໄດ້ເບິ່ງເຫັນເຖິງ ໂອກາດການຂະຫຍາຍຕົວຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານ ວັດດານາ ໄດ້ ສຳເລັດການສຶກສາດ້ານສະຖາປັດຕະຍະກຳ ແລະ ມີປະສົບການກ່ຽວກັບການກໍ່ສ້າງ, ພ້ອມຍັງ ເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການເຕີບໃຫຍ່ຂະຫຍາຍຕົວດ້ານການກໍ່ສ້າງພື້ນຖານໂຄງ ລ່າງ ພາຍໃຕ້ວິໄສທັດອັນກວ້າງໄກຂອງລັດຖະບານ. ສະນັ້ນ, ຈຶ່ງໄດ້ເລີ່ມຕົ້ນດຳເນີນທຸລະກິດຈັດ ຈຳໜ່າຍວັດສະດຸກໍ່ສ້າງທົ່ວໄປ ໃນຮ້ານຄ້າຂະໜາດໜຶ່ງຫ້ອງແຖວ (ພື້ນທີ່ປະມານ 50 ຕາແມັດ) ທີ່ ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ປັດຈຸບັນເປັນສາຂາຍ່ອຍ (ສາຂາ ທົ່ງຂັນຄຳ) ດ້ວຍທຶນຈົດທະບຽນ 3,250,000 ກີບ.
1993	➢ ເປັນຊ່ວງທີ່ພາກການກໍ່ສ້າງໃນ ສປປ ລາວ ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ, ຄວາມຕ້ອງການ ສິນຄ້າປະເພດວັດສະດຸກໍ່ສ້າງເພີ່ມຂຶ້ນ ການແຂ່ງຂັນທາງດ້ານທຸລະກິດວັດສະດຸກໍ່ສ້າງຈຶ່ງເພີ່ມຂຶ້ນ

ປີ	ເຫດການສຳຄັນ
	ອັນເປັນສາເຫດເຮັດໃຫ້ຕົ້ນທຶນສິນຄ້າທີ່ນຳເຂົ້າມາຈັດຈຳໜ່າຍບໍ່ສາມາດແຂ່ງຂັນກັບຄູ່ແຂ່ງໄດ້. ເພື່ອໃຫ້ທຸລະກິດສາມາດນຳສິນຄ້າມາຈາກໂຮງງານຜູ້ຜະລິດໄດ້ໂດຍກົງໃນຕົ້ນທຶນທີ່ຖືກລົງ, ປະກອບກັບທາງ ພັກ ແລະ ລັດຖະບານ ມີນະໂຍບາຍສະໜັບສະໜຸນໃຫ້ຊື້ກົກຂາຍປາຍ ຫຼື ການຫຼຸດຜ່ອນການຊື້ສິນຄ້າຜ່ານພໍ່ຄ້າຄົນກາງຕາມຊາຍແດນ ເພື່ອໃຫ້ຜູ້ບໍລິໂພກໃນ ສປປ ລາວ ໄດ້ຊົມໃຊ້ສິນຄ້າໃນລາຄາຖືກລົງ ອັນນຳໄປສູ່ການຍົກລະດັບຄວາມສາມາດໃນການແຂ່ງຂັນໃຫ້ສູງຂຶ້ນ. ພ້ອມທັງ ຜູ້ບໍລິຫານບໍລິສັດ ຕ້ອງການໃຫ້ບໍລິສັດມີໂຄງສ້າງການຈັດການທີ່ເປັນລະບົບ ແລະ ມີແບບແຜນຫຼາຍຂຶ້ນ. ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100,000,000 ກີບ.
1995	➢ ບໍລິສັດ ໄດ້ມີການ ຫັນປ່ຽນສິນຄ້າຫຼັກຈາກສິນຄ້າປະເພດວັດສະດຸກໍ່ສ້າງໂຄງສ້າງຫຼັກ ເຊັ່ນ: ເຫຼັກ ແລະ ຊີມັງ ມາເປັນສິນຄ້າປະເພດວັດສະດຸຕົກແຕ່ງ ເຊັ່ນ: ກະໂລ, ສຸຂະພັນ, ກ໋ອກນ້ຳ ແລະ ສິນຄ້າອື່ນໆ. ເນື່ອງຈາກວ່າສິນຄ້າໂຄງສ້າງມີໂອກາດຈະເລີນເຕີບໂຕໜ້ອຍ, ມີການແຂ່ງຂັນຫຼາຍກວ່າ ແລະ ສິນຄ້າດັ່ງກ່າວບໍ່ສາມາດສ້າງຈຸດເດັ່ນໃນການຂາຍໃຫ້ແກ່ບໍລິສັດໄດ້. ແຕ່ໃນເບື້ອງຕົ້ນ ການຈຳໜ່າຍສິນຄ້າປະເພດວັດສະດຸຕົກແຕ່ງບໍ່ໄດ້ຮັບຜົນຕອບແທນທີ່ດີ ເພາະວ່າເປັນສິນຄ້າທີ່ມີການຈັດການຍາກ, ມີການປ່ຽນແປງຮູບແບບໃໝ່ໃຫ້ທັນສະໄໝຕະຫຼອດເວລາ. ແຕ່ດ້ວຍວິໄສທັດອັນກວ້າງໄກຂອງຜູ້ບໍລິຫານ ແລະ ຄວາມມັກຮັກໃນທຸລະກິດປະເພດນີ້, ຜູ້ບໍລິຫານຂອງ ບໍລິສັດ ຈຶ່ງບໍ່ຍອມແພ້ຕໍ່ອຸປະສັກຕ່າງໆ ແລະ ຊອກຫາທຸກວິທີທາງເພື່ອທີ່ຈະສາມາດດຳເນີນທຸລະກິດໄປໄດ້ດ້ວຍດີ ໂດຍການຊອກຫາຈຸດເດັ່ນຂອງສິນຄ້າໃຫ້ມີຄວາມຫຼາກຫຼາຍ ແລະ ທັນສະໄໝຂຶ້ນເພື່ອຕອບສະໜອງກັບຄວາມຕ້ອງການຂອງລູກຄ້າ.
2000	➢ ນັບແຕ່ປີນັ້ນເປັນຕົ້ນມາ, ທຸລະກິດຂອງບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນມາໂດຍຕະຫຼອດ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ຄວາມຕ້ອງການສິນຄ້າ ທາງດ້ານວັດສະດຸກໍ່ສ້າງເພີ່ມຂຶ້ນຕາມການຈະເລີນເຕີບໂຕຂອງ ສປປ ລາວ, ປະກອບກັບ ທ່ານ ກິດສະດາ ສຸຄະບັນດິດ (ທ່ານ ກິດສະດາ) ໄດ້ສຳເລັດການສຶກສາຈາກຕ່າງປະເທດ ແລະ ກໍໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂ່ງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອຈັດຈຳໜ່າຍ ວັດສະດຸກໍ່ສ້າງ, ຕົກແຕ່ງ, ສ້ອມແປງບ້ານ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທຳອິດຂອງ ສປປ ລາວ ດ້ວຍຂະ ໜາດ 1,500 ຕາແມັດ, ມີເນື້ອທີ່ສາງ 2,000 ຕາແມັດ, ເນື້ອທີ່ຈອດລົດ 20 ຄັນ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາທົ່ງຂັນຄຳ ມາເປັນ ສາຂາໂພນຕ້ອງ (ສຳນັກງານໃຫຍ່ໃນປັດຈຸບັນ) ໂດຍ ຮ້ານຄ້າສຸວັນນີ ສາຂາທົ່ງຂັນຄຳ ໄດ້ມີການດັດແປງເປັນສູນຈຳໜ່າຍສີ ແລະ ອຸປະກອນຄົບວົງຈອນແທນມາຈົນເຖິງປັດຈຸບັນ.

ປີ	ເຫດການສຳຄັນ
2004	➢ ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນພາກການລົງທຶນ ແລະ ເພື່ອຮອງຮັບການເປັນເຈົ້າພາບການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນໃນປີ 2009, ບໍລິສັດ ໄດ້ມີການເປີດສາຂາເພີ່ມຂຶ້ນທີ່ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນຈັດຈຳໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ວາງສະແດງສິນຄ້າປະມານ 2,000 ຕາແມັດ, ພື້ນທີ່ສາງປະມານ 5,000 ຕາແມັດ ແລະ ພື້ນທີ່ຈອດລົດ 60 ຄັນ.
2011	➢ ໃນການຕອບຮັບຮູບແບບການໃຊ້ຊີວິດທີ່ທັນສະໄໝ ແລະ ອຳນວຍຄວາມສະດວກໃນການເລືອກຊື້ສິນຄ້າ ເພື່ອຮອງຮັບກັບຈຳນວນສິນຄ້າທີ່ຫຼາກຫຼາຍຂຶ້ນກວ່າ 30,000 ລາຍການ, ບໍລິສັດໄດ້ມີການປັບປຸງ ແລະ ສ້ອມແປງສາຂາໂພນຕ້ອງ ເຊິ່ງໄດ້ເພີ່ມເນື້ອທີ່ວາງສະແດງສິນຄ້າຈາກ 1,500 ຕາແມັດ ມາເປັນ 4,320 ຕາແມັດ, ເນື້ອທີ່ສາງຈາກ 2,000 ຕາແມັດ ມາເປັນ 3,053 ຕາແມັດ ແລະ ເນື້ອທີ່ຈອດລົດຈາກ 20 ຄັນ ມາເປັນ 40 ຄັນ. ແລະ ສຳເລັດໃນປີ 2013
2012	➢ ເປັນຊ່ວງປີທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳອາຊີ-ເອີຣົບ (Asia-Europe Meeting) ຄັ້ງທີ 9 ແລະ ເປັນຊ່ວງທີ່ລັດຖະບານ ສປປ ລາວ ໄດ້ອະນຸມັດການລົງທຶນຕ່າງໆ ຫຼາຍໂຄງການ ເຊັ່ນ: ໂຄງການສ້າງອາຄານສຳນັກງານ, ສ້າງສູນການຄ້າຕ່າງໆ ອັນເປັນປັດໄຈສຳຄັນທີ່ເຮັດໃຫ້ຜູ້ບໍລິຫານຂອງບໍລິສັດ ເຫັນຊ່ອງທາງທີ່ດີ ໃນການຂະຫຍາຍທຸລະກິດ ໂດຍຕົກລົງເຊັນສັນຍາການຄ້າຮ່ວມກັບບໍລິສັດ ມິຊູບິຊິ (Mitsubishi) ປະເທດຍີ່ປຸ່ນ ໃນການເປັນຕົວແທນຈຳໜ່າຍ ແລະ ໃຫ້ບໍລິການສ້ອມແປງລົບ ແລະ ຂັ້ນໄດເລື່ອນ ພາຍໃຕ້ການສິນຄ້າ Mitsubishi ພຽງແຫ່ງດຽວໃນ ສປປ ລາວ. ບໍລິສັດມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານ ທົ່ງຕູມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ (ສາຂາທົ່ງຕູມ)
2013	➢ ໄດ້ເລີ່ມມີການປັບປຸງ ແລະ ສ້ອມແປງສາຂາສີໄຄຕື່ມອີກ ໂດຍເພີ່ມພື້ນທີ່ວາງສະແດງສິນຄ້າຈາກ 2,000 ຕາແມັດ ມາເປັນ 6,520 ຕາແມັດ, ເນື້ອທີ່ສາງຈາກ 5,000 ຕາແມັດ ມາເປັນ 12,230 ຕາແມັດ ແລະ ເນື້ອທີ່ຈອດລົດຈາກ 60 ຄັນ ມາເປັນ 130 ຄັນ. ເຊິ່ງສຳເລັດໃນປີ 2014 ➢ ໃນການກຽມພ້ອມເພື່ອກ້າວເຂົ້າສູ່ປະຊາຄົມເສດຖະກິດອາຊຽນ (AEC), ເຮັດໃຫ້ບັນດານັກລົງທຶນຈາກຕ່າງປະເທດເລີ່ມຫັນມາລົງທຶນໃນ ສປປ ລາວ ຫຼາຍຂຶ້ນ ເຊິ່ງເປັນສາເຫດເຮັດໃຫ້ມີຄວາມຕ້ອງການບັນດາຕຶກອາຄານ ແລະ ສຳນັກງານຫ້ອງການເພີ່ມຂຶ້ນ. ສະນັ້ນ, ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກຸ່ມດັ່ງກ່າວ ບໍລິສັດໄດ້ມີການເຊັນສັນຍາການຄ້າຮ່ວມ ກັບ ບໍລິສັດ ໂມເດີນຟອມກຣຸບ ຈຳກັດ (ມະຫາຊົນ) (Modernform) ໃນການເປັນຕົວແທນຈຳໜ່າຍ ເຟີນີເຈີສຳເລັດຮູບ ການສິນຄ້າ Modernform ໃນຂອບເຂດນະຄອນຫຼວງວຽງຈັນ ເຊິ່ງໄດ້ຈຳໜ່າຍທີ່ສາຂາທົ່ງຕູມ.

ປີ	ເຫດການສຳຄັນ
2015	➢ ໃນປີ 2015, ບໍລິສັດ ໄດ້ມີການປັບປຸງວິສາຫະກິດເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່, ສະພາບຄວາມຕ້ອງການ ຫຼື ຄວາມຈຳເປັນທາງທຸລະກິດ ແລະ ບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເຊິ່ງ ບໍລິສັດ ໄດ້ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ດ້ວຍທຶນຈົດທະບຽນ 500,000,000 ກີບ. ➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກົດ 2015 ທີ່ໄດ້ມີວາລະພິຈາລະນາປັບປຸງມູນຄ່າທີ່ກຳນົດຮຸ້ນຂອງບໍລິສັດ ຈາກເດີມ 50,000 ກີບຕໍ່ຮຸ້ນ ເປັນ 2,000 ກີບຕໍ່ຮຸ້ນ, ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກເດີມ 500,000,000 ກີບ ເປັນ 280.00 ຕື້ກີບ ໂດຍມີຈຳນວນຮຸ້ນທັງໝົດ 140,000,000 ຮຸ້ນ, ➢ ບໍລິສັດ ໄດ້ມີການຮ່ວມລົງທຶນກັບ ບໍລິສັດ ໂກວບ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນບໍລິສັດຮ່ວມທຶນລະຫວ່າງ ບໍລິສັດ ສະຫຍາມໂກວບ້ອນເຮົ້າ ຈຳກັດ (ມະຫາຊົນ) ແລະ ບໍລິສັດ ປູນຊີເມັນໄທ ຈຳກັດ ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົກແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ. ➢ ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ “ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ” ພ້ອມກັບໄດ້ເພີ່ມທຶນຈົດທະບຽນເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50.00 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25,000,000 ຮຸ້ນ, ມູນຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ. ➢ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ນຳຮຸ້ນເຂົ້າແລກປ່ຽນ-ຊື້ຂາຍ ໃນຕະຫຼາດ ➢ ຫຼັກຊັບລາວຄັ້ງທຳອິດ (First Trading Day) ໃນວັນທີ 11 ທັນວາ 2015
2016	➢ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເມື່ອວັນທີ 22 ເມສາ 2016 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນ, ຖະໜົນ T4, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 118 ທ່ານ ມາດ້ວຍຕົນເອງ 30 ທ່ານ ແລະ 88 ທ່ານ ຮັບມອບສິດ, ຖືຮຸ້ນລວມ 157,735,300 ຮຸ້ນ ຄິດເປັນ 95.60% ຂອງ

ປີ	ເຫດການສຳຄັນ
	ຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມພິຈາລະນາ 9 ວາລະ ວາລະສຳຄັນຄື: ການພິຈາລະນາເງິນປັນຜົນປະຈຳປີ 2015 ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງກອງປະຊຸມ ຜູ້ຖືຮຸ້ນໄດ້ມີມະຕິ ແບ່ງປັນເງິນປັນຜົນເປັນຈຳນວນເງິນ 45 ກີບ/ຮຸ້ນ ➢ ວັນທີ 12/08/2016 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ 2 ຂຶ້ນ ທີ່ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຊັ້ນ 4 ເວລາ 16:00 -17:45 ມີຜູ້ເຂົ້າຮ່ວມທັງໝົດ 8 ທ່ານ
2017	➢ ໃນວັນທີ 30 ມັງກອນ 2017 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ເປັນສາຂາທີ 5 ຢູ່ພາຍໃນນະຄອນຫຼວງວຽງຈັນຄື: ສາຂາ ໂຊກໃຫຍ່ ເຊິ່ງຕັ້ງຢູ່ເສັ້ນທາງ 450 ປີ ບ້ານ ໂຊກໃຫຍ່ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ➢ ໃນວັນທີ 17 ກຸມພາ 2017 ໄດ້ຈັດກອງປະຊຸມ ສະພາບໍລິຫານ ຄັ້ງທີ 1/2017 ທີ່ສຳນັກງານໃຫຍ່ ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ.ກອງປະຊຸມຄັ້ງນີ້, ໄດ້ພິຈາລະນາຫຼາຍບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງກ່ອນ, ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດປະຈຳປີ 2016 ແລະ ຮ່າງບົດລາຍງານການເງິນປະຈຳປີ 2016, ແຜນການດຳເນີນງານປີ 2017, ການຈ່າຍເງິນປັນຜົນປະຈຳປີ 2016, ການແຕ່ງຕັ້ງຜູ້ກວດສອບບັນຊີ, ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທີ່ຄົບວາລະ, ພິຈາລະນາຄ່າຕອບແທນສະມາຊິກ ສະພາບໍລິຫານ, ການເພີ່ມຕື່ມວັດຖຸປະສົງຂອງບໍລິສັດ, ການແກ້ໄຂທະບຽນວິສາຫະກິດ, ການຮຽກປະຊຸມຜູ້ຖືຮຸ້ນ ແລະ ເລື່ອງອື່ນໆ.

ວຽກງານດ້ານການຕະຫຼາດ

ບໍລິສັດໄດ້ສຸມໃສ່ວຽກງານດ້ານການຕະຫຼາດໂດຍ ໄດ້ມີການຄັດເລືອກ ແລະ ສັນຫາສິນຄ້າກຸ່ມໃໝ່ໆ ເຂົ້າມາຈຳໜ່າຍ ເພື່ອເປັນທາງເລືອກໃຫ້ແກ່ລູກຄ້າ ແລະ ຂະຫຍາຍຕະຫຼາດໃນກຸ່ມສິນຄ້າ ວັດສະດຸໂຄງສ້າງ, ເຄື່ອງໃຊ້ໄຟຟ້າ, ເຄື່ອງຕົບແຕ່ງເຮືອນ, ເຟີນີເຈີ ແລະ ອື່ນໆ ເພື່ອສະໜອງຄວາມຮຽກຮ້ອງຕ້ອງການ ຂອງລູກຄ້າ ທີ່ແຕກຕ່າງກັນ, ປັບປຸງດ້ານລະບົບໄອທີ ທີ່ໃຫ້ມີປະສິດຕິພາບສູງ, ປະມວນຜົນຢ່າງວ່ອງໄວ ແລະ ຄອບຄຸມໄດ້ເນື້ອທີ່ ທີ່ກ້ວາງຂວາງກວ່າ, ພ້ອມດ້ວຍດຽວກັນນັ້ນ ກໍ່ເລັ່ງປັບປຸງ ໂຊລູມໃຫ້ ມີຄວາມສະດວກສະບາຍ ແລະ ປັບປຸງລະບົບສື່ສານທາງ ອິນເຕີເນດເປັນຕົ້ນ, ພັດທະນາເວບໄຊ ໃຫ້ໜ້າສົນໃຈດ້ວຍ. ພ້ອມກັນນັ້ນ, ບໍລິສັດ ຍັງໄດ້ເພີ່ມຍຸດທະສາດຕ່າງໆເຂົ້າໃນການຕະຫຼາດດັ່ງລຸ່ມນີ້:

- **ຍຸດທະສາດດ້ານຜະລິດຕະພັນ (Product)**:

ບໍລິສັດຕອບສະໜອງສິນຄ້າແກ່ຜູ້ບໍລິໂພກດ້ວຍສິນຄ້າທີ່ມີຄຸນະພາບ ແລະ ຄວາມຫຼາກຫຼາຍໃຫ້ແກ່ຜູ້ບໍລິໂພກ ໂດຍບໍລິສັດຈະຄັດເລືອກສິນຄ້າຈາກຜູ້ຜະລິດທີ່ເປັນທີ່ຍອມຮັບລະດັບສາກົນ ໂດຍມີສິນຄ້າຫຼາຍກວ່າ 830 ຍີ່ຫໍ້ ປະກອບໄປດ້ວຍສິນຄ້າທີ່ຫຼາກຫຼາຍກວ່າ 77,222 ລາຍການ ແລະ ຍັງໄດ້ມີການເພີ່ມຈຳນວນສິນຄ້າໃໝ່ເຂົ້າມາເລື້ອຍໆ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ ໂດຍມີຈຸດມຸ່ງໝາຍໃຫ້ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນສູນລວມວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນ ແບບ One Stop Service ຫຼື ບໍລິການປະຕູດຽວ ໂດຍສະໜອງສິນຄ້າໃຫ້ຄອບຄຸມທຸກໝວດ, ທຸກກຸ່ມສິນຄ້າ ກ່ຽວກັບເຮືອນ ມາທີ່ດຽວຄົບທຸກຢ່າງສຳລັບເຮືອນຂອງຜູ້ບໍລິໂພກກໍ່ຄື ລູກຄ້ານັ້ນເອງ ດັ່ງຄຳຂັວນທີ່ວ່າ: ສຸວັນນີ ໂຮມເຊັນເຕີ ຈິນຕະນາການ ທີ່ເປັນໄປໄດ້.

- **ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ (Place)**

ບໍລິສັດ ເອົາໃຈໃສ່ຈັດຕັ້ງຊ່ອງທາງການຈັດຈຳໜ່າຍ ຫຼື ສາຂາ ໃນສະຖານທີ່ຊຸມຊົນໂດຍໃນປັດຈຸບັນຕັ້ງຢູ່ໃນນະຄອນຫຼວງວຽງຈັນທັງໝົດ ເຊິ່ງສະດວກຕໍ່ການເດີນທາງ . ໃນອະນາຄົດ ບໍລິສັດມີເປົ້າໝາຍໃນການຂະຫຍາຍສາຂາ ເຊິ່ງກໍ່ເປັນໜຶ່ງໃນຊ່ອງທາງການຈັດຈຳໜ່າຍ ຂອງບໍລິສັດ ຄອບຄຸມຕາມຕົວເມືອງໃຫຍ່ ຄຽງຄູ່ການຂະຫຍາຍສາຂາ ນຳສິນຄ້າເກົ່າ ແລະ ໃໝ່ ສະໜອງໃຫ້ລູກຄ້າໃໝ່ ບໍລິສັດ ຍັງໄດ້ມຸ່ງເນັ້ນຂະຫຍາຍສາຍຜະລິດຕະພັນໃໝ່ໃນສາຂາເກົ່າ ເພື່ອທາງເລືອກໃໝ່ ໃຫ້ລູກຄ້າທີ່ມີຢູ່ແລ້ວ ຕອບສະໜອງຄວາມຕ້ອງການຜູ້ບໍລິໂພກ ທີ່ມີຄວາມແຕກຕ່າງກັນ ພ້ອມທັງຍັງເປັນການຮອງຮັບການເຕີບໂຕ ຂອງພາກການກໍ່ສ້າງໃນອະນາຄົດ.

- **ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)**

ບໍລິສັດມີນະໂຍບາຍສົ່ງເສີມການຕະຫຼາດທີ່ຫຼາກຫຼາຍ ແລະ ແຕກຕ່າງຕາມຄວາມເໝາະສົມຂອງກຸ່ມປະເພດສິນຄ້າ ໂດຍຈະເນັ້ນການສົ່ງເສີມການຕະຫຼາດສຳລັບສິນຄ້າຊະນິດໃໝ່ ແລະ ສິນຄ້າທີ່ໝຸນວຽນຊ້າ ລວມເຖິງສິນຄ້າທີ່ເຂົ້າຮ່ວມກິດຈະກຳທາງການຕະຫຼາດຈາກຜູ້ຜະລິດ ໂດຍຜ່ານກິດຈະກຳຕ່າງໆ ທາງການຕະຫຼາດ ເພື່ອສ້າງຄວາມຮັບຮູ້

ຍີ່ຫໍ້, ຜະລິດຕະພັນ ແລະ ສ້າງພາບທີ່ດີ ໃຫ້ແກ່ບໍລິສັດ ເພື່ອຍົກສູງຄຸນຄ່າຂອງ ຍີ່ຫໍ້ບໍລິສັດ, ຜະລິດຕະພັນ ແລະ ການ ບໍລິການຜ່ານ 3 ຊ່ອງທາງໃຫຍ່ຄື:

❖ **ການໂຄສະນາ:**

- ຜ່ານສື່ພິມຕ່າງໆເຊັ່ນ: ໃບປິວ, ວາລະສານ, ໜັງສືພິມ
- ຜ່ານປ້າຍໂຄສະນາເຊັ່ນ: ປ້າຍຄົ້ງທີ່, ປ້າຍເຄື່ອນທີ່, ປ້າຍທາວເວີ, ປ້າຍໄຟ, ປ້າຍຂ້າງທາງ ແລະ ອື່ນໆ.
- ຜ່ານສື່ອີເລັກໂທນິກຕ່າງໆ ເຊັ່ນ: Website: souvanny.com, Facebook: SOVANNY Home Center, ວິທະຍຸ, ໂທລະພາບ, Social Media ຕ່າງໆ.

❖ **ການສົ່ງເສີມການຂາຍ**

ໂດຍຜ່ານກິດຈະກຳຕ່າງເຊັ່ນ: ການຫຼຸດລາຄາພິເສດສະເພາະງານ, ແລກ, ແຈກ, ແຖມ, ຊິງໂຊກ, ການຈັດງານເປີດໂຕສິນຄ້າໃໝ່ຕ່າງໆຄື: ການເປີດໂຕສູນຮັບອອກແບບ ແລະ ໃຫ້ຄຳປຶກສາ ດ້ານຫ້ອງນ້ຳ COTTO Studio, ງານເປີດໂຕສິນຄ້າໃໝ່ ເຄື່ອງຄົວ ພາຍໃຕ້ຍີ່ຫໍ້ Starmark.

❖ **ກິດຈະກຳຊ່ວຍເຫຼືອສັງຄົມ**

ບໍລິສັດຍັງໄດ້ຊ່ວຍເຫຼືອສັງຄົມ ຄື: ມີການມອບຕູ້ນ້ຳຮ້ອນ ແລະ ນ້ຳເຢັນ ໃຫ້ແກ່ ຫ້ອງການບ້ານໂຊກໃຫຍ່, ຫ້ອງການບ້ານໂຊກນ້ອຍ, ຫ້ອງການບ້ານໂພນທອງ ແລະ ຫ້ອງການບ້ານນາບຽນ ລວມມູນຄ່າ ຈຳນວນ 4.656.000 ກີບ. ມີການມອບຖັງເກັບນ້ຳ ຂະໜາດ 2000 ລິດ 1 ຖັງ, ພັດລົມຕິດເພດານ 6 ໜ່ວຍ , ໂຕະ ແລະ ຕັ່ງນັກຮຽນ 10 ຊຸດ, ມອບຕູ້ນ້ຳຮ້ອນ ແລະ ນ້ຳເຢັນ 1 ໜ່ວຍ ໃຫ້ແກ່ ໂຮງຮຽນປະຖົມບ້ານໂຊກໃຫຍ່ , ໂຮງຮຽນປະຖົມບ້ານໂຊກ, ໂຮງຮຽນປະຖົມບ້ານໂພນທອງ ແລະ ໂຮງຮຽນປະຖົມບ້ານນາບຽນ ຕາມລຳດັບ ລວມ ເປັນມູນຄ່າ 8.157.000 ກີບ ແລະ ຍັງໄດ້ມອບກະໂລ້ 200 ກ່ອງ ໃຫ້ແກ່ ທີມງານຕຳຫຼວດ ແລະ ລາຍການນາທີຊີວິດ ລວມເປັນມູນຄ່າ 7.248.000 ກີບ


ວຽກງານດ້ານບຸກຄະລາກອນ

ການດຳເນີນວຽກງານດ້ານບຸກຄະລາກອນໃນຕົ້ນປີ 2017 ແມ່ນໄດ້ເນັ້ນໃນການເປັນຄູ່ຮ່ວມທາງຍຸດທະສາດຂອງອົງກອນ ໂດຍການປັບປຸງໂຄງຮ່າງການຈັດຕັ້ງຂອງອົງກອນ ຈາກໂຄງສ້າງທີ່ເປັນ ບໍລິສັດ ຈຳກັດ ມາເປັນບໍລິສັດ ມະຫາຊົນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.

ໃນເບື້ອງສະຫວັດດີການ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ມີສະພາບການເປັນຢູ່ທີ່ດີຂຶ້ນ, ມີຄວາມປອດໄພ ແລະ ເພື່ອເປັນການສົ່ງເສີມໃຫ້ພະນັກງານມີຄວາມດຸໝັ່ນ, ຫ້າວຫັນ, ກະຕືລືລົ້ນໃນການປະຕິບັດວຽກງານ, ໃນປີ 2017 ທາງບໍລິສັດໄດ້ມີການມອບລິດປະຈຳຕຳແໜ່ງໃຫ້ຜູ້ຈັດການ ສາຂາ ໂຊກໃຫຍ່ 1 ຄົນ (AVANZA)

ພາບລວມ ແລະ ຜົນງານຂອງໄຕມາດ

- ຈຳນວນພະນັກງານທັງໝົດຮອດວັນທີ 31 ມີນາ 2017 ມີຈຳນວນ 793 ຄົນ,
- ຮັບພະນັກງານເຂົ້າໃໝ່ທັງໝົດຈຳນວນ 106 ຄົນ, ຮັບເຂົ້າມາທົດແທນຄົນຕຳແໜ່ງວ່າງ 0 ຄົນ.
- ອັດຕາການລາອອກຂອງພະນັກງານສົມບູນທັງໝົດ 34 ຄົນ ກວມເອົາ 2 %
- ຖືກປົດອອກ 0 ຄົນ
- ຖືກເລື່ອນຕຳແໜ່ງຈຳນວນ 19 ຄົນ,



- **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ ແມ່ນເພີ່ມຂຶ້ນ 5 %
- ເງິນປັນຜົນໃຫ້ພະນັກງານ (commission) ຈຳນວນ 6 ງວດຕໍ່ປີ

- ຄ່າປະກັນສຸຂະພາບ(ປະກັນສັງຄົມ) 44.137.500 ກີບ
- ຄ່າທຳນຽມກວດສຸຂະພາບປະຈຳປີ 0 ກີບ
- ຊຸກຍູ້ພະນັກງານເກີດລູກໃໝ່ 0 ກີບ
- ຊ່ວຍກິນທານນຳພະນັກງານ ແລະ ຍາດສາຍຕັ້ງເສຍຊີວິດ 15.205.000 ກີບ

- **ກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ** ໃນໄຕມາດ 1 (ເດືອນ 1-3)
- ໄດ້ມີການຈັດກິດຈະກຳພາພະນັກງານໄປທ່ອງທ່ຽວ 5 ຄັ້ງ/ປີ
- ໄດ້ມີການຈັດງານກິລາເພື່ອເສີມສ້າງຄວາມສາມັກຄີຂອງພະນັກງານໃນອົງກອນ
- **ນະໂຍບາຍພິເສດສຳລັບພະນັກງານ**

  ບໍລິສັດໄດ້ໃຫ້ພະນັກງານໄປທ່ອງທ່ຽວປະຈຳປີກັບກຸ່ມຊັບພະຍາຍເອີ້ທີ່ບໍລິສັດໃຫ້ມາ.

ວຽກງານດ້ານຍຸດທະສາດອົງກອນ

ຍຸດທະສາດອັນສຳຄັນຂອງບໍລິສັດ ແມ່ນກົງກັບຄຳຂວັນຂອງ ບໍລິສັດທີ່ວ່າ ຍົກລະດັບສິນຄ້າ ແລະ ບໍລິການ ສິ່ງມອບຖືກຕ້ອງ ຄົບຖ້ວນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ ເຊິ່ງໄດ້ມີລະບົບການ ບໍລິຫານງານທີ່ມີຄຸນະພາບ ແລະ ໄດ້ຮັບມາດຕະຖານສາກົນ ISO9001-2008 ແລະ ຍັງຈະສືບເນື່ອງພັດທະນາ ລະບົບການບໍລິຫານງານໃຫ້ໄດ້ມາດຕະຖານ ISO 2015 ເຂົ້າໃນການບໍລິຫານງານຂອງທຸກສາຂາ.

ການມອບພັນທະອາກອນ

ຫລັງຈາກບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນໃນຕະຫລາດຫລັກຊັບລາວ ຊ່ວງທ້າຍປີ 2015 ບໍລິສັດກໍ່ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດ ເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ້ມ 10% ອາກອນເງິນເດືອນ ອາກອນ ກຳໄລ ເປັນຕົ້ນ.

ການມອບພັນທະອາກອນໃຫ້ລັດປະຈຳໄຕມາດ 1 ປີ2017

ລ/ດ	ລາຍການ	ຫົວໜ່ວຍ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ້ມ		361.703.154
2	ອາກອນເງິນເດືອນ		259.944.384
3	ອາກອນກຳໄລ		815.307.409
	ລວມ		**1.436.954.947**

ຜົນການດຳເນີນທຸລະກິດໄຕມາດ 1 ປີ 2017

	ບິດ ອະທິບາຍ	31 ມີນາ 2017 ກີບ	31 ທັນວາ 2016 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	20.463.254.088	26.762.714.091
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	17.617.096.098	18.182.486.807
ເຄື່ອງໃນສາງ, ສຸດທິ	6	128.796.097.429	109.128.048.651
ຊັບສິນໝຸນວຽນອື່ນໆ		47.169.366.115	5.108.127.818
ລວມຊັບສິນໝຸນວຽນ		214.045.813.730	159.181.377.367
ຊັບສິນບໍ່ໝຸນວຽນ			
ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ	7	400.917.615.875	376.208.692.652
ຊັບສິນຄົງທີ່ທີ່ບໍ່ມີຕົວຕົນ, ສຸດທິ		595.501.848	514.579.909
ລວມຊັບສິນບໍ່ໝຸນວຽນ		401.513.117.723	376.723.272.561
ລວມຊັບສິນ		615.558.931.453	535.904.649.928

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດດາພາ ສຸຄະບັນດິດ
ກຳມະການຜູ້ຈັດການ
Date: 10 May 2017

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
Date: 10 May 2017

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ທັນວາ 2016 ກີບ
ໜີ້ສິນ ແລະ ທຶນຂອງຜູ້ຖືຮຸ້ນ			
ໜີ້ສິນໝຸນວຽນ			
ເງິນເບີກເກີນບັນຊີ		152.829.357	39.757.131
ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ	8	27.773.542.688	36.384.747.898
ພາກສ່ວນຂອງເງິນໃຫ້ກູ້ຢືມໄລຍະຍາວ			
ຈາກສະຖາບັນການເງິນ	9	23.757.088.647	2.607.650.479
ໜີ້ຕ້ອງສົ່ງອາກອນກຳໄລ	12	832.166.249	333.739.602
ໜີ້ສິນໝຸນວຽນອື່ນໆ		69.993.322.514	25.029.383.124
ລວມໜີ້ສິນໝຸນວຽນ		122.508.949.455	64.395.278.234
ໜີ້ສິນບໍ່ໝຸນວຽນ			
ເງິນໃຫ້ກູ້ຢືມໄລຍະຍາວຈາກສະຖາບັນການເງິນ		549.033.106	849.235.813
ລວມໜີ້ສິນບໍ່ໝຸນວຽນ		549.033.106	849.235.813
ລວມໜີ້ສິນ		123.057.982.561	65.244.514.047
ທຶນຂອງຜູ້ຖືຮຸ້ນ			
ທຶນ			
ທຶນຈົດທະບຽນ			
ຮຸ້ນສາມັນ ຈຳນວນ 165 ລ້ານ ຮຸ້ນ ເຊິ່ງມູນຄ່າ ຮຸ້ນລະ 2,000 ກີບ (2015 : 165 ລ້ານ ຮຸ້ນ ເຊິ່ງມູນຄ່າ ຮຸ້ນລະ 2,000 ກີບ)		330.000.000.000	330.000.000.000
ທຶນທີ່ອອກ ແລະ ຊຳລະແລ້ວ			
ຮຸ້ນສາມັນ ຈຳນວນ 165 ລ້ານ ຮຸ້ນ ເຊິ່ງມູນຄ່າ ຮຸ້ນລະ 2,000 ກີບ (2015 : 165 ລ້ານ ຮຸ້ນ ເຊິ່ງມູນຄ່າ ຮຸ້ນລະ 2,000 ກີບ)		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ສຳຮອງເງິນຕາມກົດໝາຍ	10	2.526.212.479	2.906.968.288
ສຳຮອງເງິນອື່ນໆ	10	2.276.212.479	2.656.968.288
ກຳໄລລໍຖ້າແບ່ງປັນ		150.134.341.152	150.388.294.678
ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		(17.171.541.939)	(40.027.820.095)
ລວມທຶນຂອງຜູ້ຖືຮຸ້ນ		492.500.948.892	470.660.135.881
ລວມທຶນຂອງຜູ້ຖືຮຸ້ນ ແລະ ໜີ້ສິນ		615.558.931.453	535.904.649.928

ອັດຕານາ ສຸຄະບັນດັດ
ກຳມະການຜູ້ຈັດການ
Date: 10 May 2017

ພັນໄມລາ ສຸຄະບັນດັດ
ຮອງກຳມະການຜູ້ຈັດການ
Date: 10 May 2017

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 7 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານຜົນໄດ້ຮັບ

ສຳລັບສິ້ນສຸດວັນທີ 31 ມີນາ 2017

	ບົດອະທິບາຍ	31 ມີນາ 2017 ກີບ	31 ມີນາ 2016 ກີບ
ລາຍໄດ້ຈາກການຂາຍ		66.894.090.521	88.678.777.184
ລາຍໄດ້ຈາກການບໍລິການ		449.472.077	377.665.650
ຕົ້ນທຶນໃນການຂາຍ		(56.750.173.007)	(78.070.646.325)
ຕົ້ນທຶນໃນການບໍລິການ		(357.498.871)	(326.756.504)
ກຳໄລລວມຂັ້ນຕົ້ນ		10.235.890.720	10.659.040.005
ລາຍຮັບອື່ນໆ		4.857.774.418	635.988.164
ລາຍຈ່າຍໃນການຂາຍ		(698.837.688)	(259.121.495)
ລາຍຈ່າຍບໍລິຫານ		(8.868.048.798)	(3.630.587.758)
ກຳໄລຈາກອັດຕາແລກປ່ຽນ ສຸດທ້		(903.913.150)	(789.795.088)
ກຳໄລ ກ່ອນອາກອນກຳໄລ	12	4.622.865.502	6.615.523.828
ອາກອນກຳໄລ		(815.307.408)	(1.001.872.333)
ກຳໄລສຸດທິໃນປີ		3.807.558.093	5.613.651.495
ກຳໄລຕໍ່ຮຸ້ນ			
ພື້ນຖານກຳໄລຕໍ່ຮຸ້ນ	13	23	111

ອັດຕາມາ ສຸຄະບັນດິດ
ກຳມະການຜູ້ຈັດການ
Date: 10 May 2017

ພັນໃນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
Date: 10 May 2017

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 7 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບົດອະທິບາຍ	ຮຸ້ນສາມັນທີ່ອອກແລະຈ່າຍແລ້ວ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ສຳຮອງເງິນຕາມກົດໝາຍ ກີບ	ສຳຮອງເງິນອື່ນໆ ກີບ	ກຳໄລສະສົມ ລໍຖ້າແບ່ງປັນ ກີບ	ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2016		330.000.000.000	24.735.724.722	2.092.819.578	1.842.819.578	151.300.105.001	(44.907.015.341)	465.064.453.538
ເງິນໄດ້ຮັບຈາກການອອກຮຸ້ນ			-	-	-	-	-	
ສ່ວນເພີ່ມມູນຄ່າຮຸ້ນ		-		-	-	-	-	
ສຳຮອງເງິນຕາມກົດໝາຍ		-	-	814.148.710	-	(814.148.710)	-	-
ສຳຮອງເງິນອື່ນໆ		-	-	-	814.148.710	(814.148.710)	-	-
ກຳໄລສຸດທິພາຍໃນປີ		-	-	-	-	8.141.487.097	-	8.141.487.097
ຈ່າຍເງິນປັນຜົນ	11	-	-	-	-	(7.425.000.000)	-	(7.425.000.000)
ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	4.879.195.246	4.879.195.246
ຍອດເຫຼືອໃນວັນທີ 31 ທັນວາ 2016		330.000.000.000	24.735.724.722	2.906.968.288	2.656.968.288	150.388.294.678	(40.027.820.095)	470.660.135.881
ຍອດຍົກມາ ວັນທີ 1 ມັງກອນ 2017		330.000.000.000	24.735.724.722	2.906.968.288	2.656.968.288	150.388.294.678	(40.027.820.095)	470.660.135.881
ສຳຮອງເງິນຕາມກົດໝາຍ		-	-	(380.755.809)	-	(380.755.809)	-	(761.511.619)
ສຳຮອງເງິນອື່ນໆ		-	-	-	(380.755.809)	(380.755.809)	-	(761.511.619)
ກຳໄລສຸດທິພາຍໃນປີ		-	-	-	-	3.807.558.093	-	3.807.558.094
ຈ່າຍເງິນປັນຜົນ	11	-	-	-	-	(3.300.000.000)	-	(3.300.000.000)
ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	22.856.278.156	22.856.278.156
ຍອດເຫຼືອໃນວັນທີ 31 ມີນາ 2017		330.000.000.000	24.735.724.722	2.526.212.479	2.276.212.479	150.134.341.151	(17.171.541.939)	492.500.948.891

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
Date: 10 May 2017

ພັນໄມລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
Date: 10 May 2017

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 7 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ມີນາ 2016 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ		4.622.865.502	5.613.651.495
ການດັດແກ້ຈາກກຳໄລສຸດທິໄປເປັນເງິນສົດສຸດທິ		0	
ຄ່າຫຼຸ້ຍຫ້ຽນ	7	858.730.776	304.924.049
ຕັດຈ່າຍຊັບສິນທີ່ບໍ່ມີຕົວຕົນ		81.189.398	-
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ		3.102.603.318	3.390.744.977
ສຳຮອງເຄື່ອງໃນສາງ		1.344.275.433	(1.538.542.972)
ບັນຊີໜີ້ສົງໄສຈະເສຍ		(756.248.706)	(175.339.988)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		9.253.415.721	7.595.437.562
ການປ່ຽນແປງຈາກ ການດຳເນີນງານຂອງທຶນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(7.044.959.601)	684.321.322
- ເຄື່ອງໃນສາງ		(16.150.867.006)	(14.345.968.650)
- ຊັບສິນໝຸນວຽນອື່ນໆ		(41.833.680.441)	(3.090.814.404)
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(10.232.079.925)	(1.476.512.927)
- ໜີ້ສິນໝຸນວຽນອື່ນໆ		46.904.692.704	(21.421.073)
- ອາກອນກຳໄລທີ່ຕ້ອງຈ່າຍ		916.224.373	(3.159.674.236)
- ການຊຳລະໜີ້ອາກອນກຳໄລ		(98.925.620)	
- ການຊຳລະໜີ້ເງິນເບີກເກີນທະນາຄານ			28.784.395
ກະແສເງິນສົດທີ່ເກີດຈາກການດຳເນີນງານ		(18.367.030.056)	(13.785.848.011)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		(18.367.030.056)	(13.785.848.011)
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຊື້ຊັບສິນບັດຄົງທີ		(8.659.478.526)	(2.658.058.783)
ຊື້ຊັບສິນບັດຄົງທີ ທີ່ບໍ່ຕົວຕົນ		(162.111.337)	-
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(8.821.589.863)	(2.658.058.783)

ອັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
Date: 10 May 2017

ພົນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
Date: 10 May 2017

	ບົດ ອະທິບາຍ	31 ມີນາ 2017 ກີບ	31 ມີນາ 2016 ກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນທີ່ໄດ້ຈາກການກູ້ຢືມຈາກທະນາຄານ		20.869.829.656	
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ	9	(61.520.001)	(115.886.730)
ການຊຳລະຄືນຂອງເງິນກູ້ຢືມໄລຍະສັ້ນຈາກພາກສ່ວນທີ່ກ່ຽວຂ້ອງ			
ເງິນທີ່ໄດ້ຈາກການອອກຮຸ້ນສາມັນ			
ຈ່າຍເງິນປັນຜົນ			-
ເງິນສົດສຸດທິຈາກກິດຈະກຳທາງການເງິນ		20.808.309.655	(115.886.730)
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(6.299.460.003)	(16.559.793.524)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		26.762.714.091	96.575.616.427
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		0	1.956.511.054
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍງວດ		20.463.254.088	81.972.333.957
ເຈົ້າໜີ້ອື່ນໆສຳລັບງານລະຫວ່າງການກໍ່ສ້າງ		169.133.596	228.552.697

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
Date: 10 May 2017

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
Date: 10 May 2017

1 ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນບໍລິສັດ ມະຫາຊົນ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍ ສິນຄ້າ ແລະ ອຸປະກອນສຳລັບການກໍ່ສ້າງ. ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢູ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງ ໃຫ້ກັບທຸລະກິດຂາຍຍ່ອຍ.

ມີສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະ ຍັງມີສາຂາ 5 ສາຂາຢູ່ໃນນະຄອນຫຼວງວຽງຈັນເຊັ່ນ: ສາຂາໂພນຕ້ອງ, ສາຂາສີໄຄ, ສາຂາທົ່ງຂັນຄຳ, ສາຂາທົ່ງຕູມ ແລະ ສາຂາໂຊກໃຫຍ່.

ໃນວັນທີ 15 ກໍລະກົດ 2015 ບໍລິສັດ ໄດ້ປ່ຽນສະຖານະຂອງ ບໍລິສັດ ຈາກ ຈຳກັດຜູ້ດຽວ ມາເປັນ ບໍລິສັດ ຈຳກັດ ແລະ ໄດ້ ປ່ຽນຊື່ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າຈຳກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີການຄ້າຂາອອກ-ຂາເຂົ້າຈຳກັດ. ໃນວັນທີ 21 ກັນຍາ 2015 ບໍລິສັດ ໄດ້ປ່ຽນສະຖານະຂອງ ບໍລິສັດ ຈາກ ບໍລິສັດ ຈຳກັດ ໄປເປັນ ບໍລິສັດ ມະຫາຊົນ ແລະ ໄດ້ ປ່ຽນຊື່ເປັນ "ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ".

ບໍລິສັດໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015

ເອກະສານລາຍງານການເງິນປະຈຳ 3 ເດືອນ ສະບັບນີ້ໄດ້ຜ່ານອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 10/05/2017.

ເອກະສານລາຍງານການງານສະບັບນີ້ໄດ້ຖືກທົບທວນຄືນ ແຕ່ບໍ່ໄດ້ກວດສອບ.

ສຳລັບໂຄງຮ່າງຂອງບົດລາຍງານທາງດ້ານການເງິນແມ່ນໄດ້ຖືກກະກຽມໂດຍອີງຕາມຂໍ້ກຳນົດເລກທີ 017/ຄຄຊ (LSCO) ເຊິ່ງໄດ້ຖືກຕີພິມໂດຍ ຫ້ອງການຄຸ້ມຄອງຕະຫລາດຫລັກຊັບລາວ ("LSCO") ລົງວັນທີ 22 ຕຸລາ 2015 ເພື່ອກຳນົດ ຈຸດປະສົງໃຫມ່ສຳລັບ ສ.ປ.ປ ລາວ. ເຖິງຢ່າງໃດກໍຕາມ, ການກະກຽມບົດລາຍງານທາງດ້ານການເງິນ ອາດຈະບໍ່ເປັນໄປຕາມ ຫລັກການສາກົນລວມທັງການທີ່ບໍ່ມີຂໍ້ມູນປຽບທຽບໃນບາງພາກສ່ວນ.

2 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ 3 ເດືອນຕົ້ນປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບວິທີການບັນຊີຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍ ລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2016. ເອກະສານລາຍງານການເງິນ ເບື້ອງຕົ້ນນີ້ (ເປັນຕົ້ນ: ໃບສະຫຼຸບຊັບສິນປັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ ແລະ ໃບລາຍງານກະແສເງິນສົດ) ໄດ້ຖືກສ້າງຂຶ້ນຕາມຮູບແບບມາດຕະຖານກຳນົດໄວ້, ສ່ວນບົດອະທິບາຍຊ້ອນທ້າຍເອກະສານລາຍ ງານການເງິນ ໄດ້ສ້າງຂຶ້ນ ໃນຮູບແບບໂດຍຫຍໍ້.

ເອກະສານລາຍງານການເງິນ 3 ເດືອນຕົ້ນປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນ ທີ 31 ທັນວາ 2016.

ລາຍຈ່າຍ ທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນຮອບໄລຍະປີການບັນຊີ ໄດ້ຖືກບັນທຶກເປັນຄ່າໃຊ້ຈ່າຍ ແລະ ຄ່າໃຊ້ຈ່າຍລໍຖ້າຕັດຈ່າຍ ໃນເອກະສານລາຍງານການເງິນຕົ້ນປີ ໂດຍໃຊ້ຫຼັກການດຽວກັນກັບການບັນທຶກໃນເອກະສານລາຍງານການເງິນທ້າຍປີ ໃນການ ບັນທຶກລາຍຈ່າຍ ແລະ ຄ່າໃຊ້ຈ່າຍລໍຖ້າຕັດຈ່າຍ.

2 ພື້ນຖານໃນການກະກຽມ (ຕໍ່)

ໃນ ສປປ ລາວ ຍັງບໍ່ທັນໄດ້ມີການອາງມາດຕະຖານບັນຊີອອກ. ມາດຕະຖານດ້ານການບັນຊີລາວ ແມ່ນກຳລັງມີການພັດທະນາ ພາຍໃຕ້ ກົມບັນຊີ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບບັນຊີ (LCPAA). ໃນປັດຈຸບັນ, ບັນດາ ບໍລິສັດ ໄດ້ ນຳໃຊ້ປຶ້ມຄູ່ມື ກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີ ທີ່ອາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມື ດັ່ງກ່າວ ໄດ້ອາງຂໍ້ ແນະນຳ ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມື ດັ່ງກ່າວ ແລະ ມາດຕະຖານ ສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສິນບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ, ຜົນປະໂຫຍດພະນັກງານ, ອາກອນລາຍໄດ້, ເຄື່ອງມືທາງດ້ານການເງິນ ແລະ ໃບລາຍງານກະແສເງິນສົດ ແລະ ຕົ້ນທຶນເງິນກູ້ຢືມ. ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງ ທີ່ສຳຄັນ ໂດຍທຽບຖານ ຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງ ມາດຕະຖານສາກົນ ດ້ານການລາຍງານ ການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂົງເຂດ.

3. ການຄາດຄະເນ

ການກະກຽມຂໍ້ມູນທາງການເງິນ 3 ເດືອນຕົ້ນປີ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານ ມີການຕັດສິນໃຈ, ການຄາດຄະເນ ແລະ ສົມມຸດ ຕິຖານທີ່ມີຜົນກະທົບການນຳໃຊ້ນະໂຍບາຍການບັນຊີ ແລະ ປະລິມານການລາຍງານຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ຄ່າໃຊ້ຈ່າຍ ຜົນທີ່ແທ້ຈິງອາດຈະແຕກຕ່າງຈາກທີ່ປະມານ.

ໃນການສ້າງເອກະສານລາຍງານການເງິນ 3 ເດືອນຕົ້ນປີ ມີການຕັດສິນທີ່ສຳຄັນ ຂອງຜູ້ບໍລິຫານໃນການນຳໃຊ້ນະໂຍບາຍ ການບັນຊີຂອງບໍລິສັດ ແລະ ເປັນແຫຼ່ງຕົ້ນຕໍຂອງຄວາມບໍ່ແນ່ນອນ ຄາດຄະເນໄດ້ເຊັ່ນດຽວກັນກັບຜູ້ທີ່ນຳໃຊ້ກັບຂໍ້ກຳນົດ ທາງດ້ານການເງິນສຳລັບປີໄດ້ສິ້ນສຸດລົງ 31 ເດືອນທັນວາ 2016.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ເງິນສົດໃນມື	432.628.296	260.876.359
ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນ ການເງິນ	20.030.625.792	26.501.837.732
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	20.463.254.088	26.762.714.091

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງ ພາຍໃນປະເທດໃນ 3 ສະກຸນເງິນ ໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ.

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ໜີ້ຕ້ອງຮັບການຄ້າ	17.340.923.450	17.619.335.378
ຫັກ ໜີ້ສົງໄສຈະເສຍ	(648.646.804)	(1.344.978.916)
ໜີ້ຕ້ອງຮັບການຄ້າ ສຸດທິ	16.692.276.646	16.274.356.462
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ	-	-
ເງິນກູ້ຢືມພະນັກງານ	160.233.604	192.735.412
ລາຍໄດ້ຄ້າງຮັບ	-	167.626.129
ໜີ້ຕ້ອງຮັບອື່ນໆ	764.585.847	1.547.768.804
	924.819.451	1.908.130.345
ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	17.617.096.097	18.182.486.807

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ມີນາ 2017 ມີອາຍຸການດັ່ງຕໍ່ນີ້:

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ບໍ່ຄົບກຳນົດ	4.411.898.686	3.286.997.503
ເກີນກຳນົດ		
1 - 3 ເດືອນ	1.509.953.548	5.971.886.947
3 - 6 ເດືອນ	3.825.553.392	4.644.582.175
6 - 12 ເດືອນ	2.994.724.842	1.753.499.352
ເກີນ 12 ເດືອນ	4,598,792,982	1.962.369.401
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	17.340.923.450	17.619.335.378
ຫັກ ໜີ້ສົງໄສຈະເສຍ	(648.646.804)	(1.344.978.916)
ໜີ້ຕ້ອງຮັບການຄ້າ ສຸດທິ	16.692.276.646	16.274.356.462

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ 6 ເດືອນ ສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ. ການຕັ້ງໜີ້ສົງໄສຈະເສຍສຳລັບຍອດໜີ້ຕ້ອງຮັບຄ້າງຊຳລະເກີນ 6 ເດືອນ ຫຼັງຈາກຄົບກຳນົດຊຳລະ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງ ການຊຳລະຂອງບັນຊີໜີ້ຕ້ອງຮັບ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອານາຄົດ. ຜູ້ບໍລິຫານເຊື່ອວ່າ ຈຳນວນເງິນນີ້ ມີແນວໂນ້ມສູງທີ່ຈະເກັບເງິນຄືນໄດ້ພາຍໃນເດືອນຕໍ່ໄປ.

6. ສິນຄ້າໃນສາງ ສຸດທິ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ກະເບື້ອງ ແລະ ວັດສະດຸກໍ່ສ້າງ	25.560.433.496	15.094.198.097
ເຄື່ອງສຸຂະພັນ, ກອ໊ກນ້ຳ ແລະ ເຄື່ອງຄົວ	22.859.684.900	19.005.801.542
ລິບ ແລະ ຂັ້ນໄດເລື່ອນ	23.965.563.197	25.446.500.327
ຫຼັງຄາ ແລະ ອຸປະກອນຕົບແຕ່ງ	7.422.915.962	6.758.103.770
ສີ, ເຄື່ອງມື ແລະ ອຸປະກອນໄຟຟ້າ	42.126.889.557	43.561.980.136
ອື່ນໆ	8.204.885.749	6.455.932.210
ຫັກ: ຄ່າເຊື່ອມມູນຄ່າສິນຄ້າເຄື່ອນໄຫວຊ້າ	(1.344.275.432)	(5.087.243.510)
ຄ່າເຊື່ອມມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຈະໄດ້ຮັບ	-	(2.107.223.921)
ສິນຄ້າໃນສາງ ສຸດທິ	128.796.097.429	109.128.048.651

ຕົ້ນທຶນຂອງສິນຄ້າໃນສາງຖືກຮັບຮູ້ເປັນລາຍຈ່າຍ ແລະ ລວມຢູ່ໃນ 'ຕົ້ນທຶນການຂາຍ' ເປັນຈຳນວນເງິນ 70.870 ລ້ານກີບ (ໃນປີ 2016: 240.077 ລ້ານກີບ).

7. ທີ່ດິນ ແລະ ອຸປະກອນ, ສຸດທິ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ຍອດຍົກມາສຸດທິໃນບັນຊີ	376.208.692.652	320.523.942.056
ການເພີ່ມຂຶ້ນ	8.736.417.131	5.676.975.789
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	16.759.416.868	6.192.737.068
ຂາຍຊັບສິນ	71.820.000	-
ຄ່າຫຼ້ຽຫ້ຽນ	(858.730.776)	(2.494.708.300)
ຍອດເຫຼືອມູນຄ່າຕາມບັນຊີສຸດທິ	400.917.615.875	329,898,946,613

ຍອດເພີ່ມຂຶ້ນໃນຊ່ວງລະຫວ່າງຮອບເວລາລາຍງານ 3 ເດືອນຕົ້ນປີ ສິ້ນສຸດວັນທີ 31 ມີນາ 2017. ສ່ວນໃຫຍ່ ເຄື່ອງໃຊ້ຫ້ອງການ ແລະ ໂປແກຼມ ຍອດເພີ່ມຂຶ້ນທັງໝົດ 8.736 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວທີ່ເປັນເງິນສົດ (ຊຳລະແລ້ວ) 8.736 ລ້ານກີບ ແລະ ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ (ຍັງບໍ່ໄດ້ຊຳລະ) 0 ກີບ.

8. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ໜີ້ຕ້ອງສົ່ງການຄ້າ-ບຸກຄົນທີສາມ	27.756.581.485	33.721.668.911
ໜີ້ຕ້ອງສົ່ງການຄ້າ-ພາກສ່ວນທີ່ກ່ຽວຂ້ອງ	16.961.203	2.663.078.987
ໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ	-	-
ລວມໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	27.773.542.688	36.384.747.898

9. ເງິນກູ້ຢືມຈາກສະຖາບັນການເງິນ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ໝຸນວຽນ		
ສ່ວນທີ່ໝຸນວຽນຂອງເງິນກູ້ຢືມໃນໄລຍະຍາວ	23.757.088.647	2.607.650.479
ບໍ່ໝຸນວຽນ		
ເງິນກູ້ຢືມໃນໄລຍະຍາວ	549.033.106	849.235.813
ລວມເງິນກູ້ຢືມ	24.306.121.753	3.456.886.292

ລາຍການເຄື່ອນໄຫວເງິນກູ້ຢືມມີດັ່ງນີ້

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ຍອດຍົກມາ	3.456.886.292	1.138.309.930
ການເພີ່ມຂຶ້ນ	20.756.757.430	2.607.650.436
ການຊຳລະຄືນ	(61.520.001)	(272.832.103)
ດັດແກ້ການແປງຄ່າ	153.998.032	(16.241.971)
ຍອດເຫຼືອທ້າຍ	24.306.121.753	3.456.886.292

9. ເງິນກູ້ຢືມຈາກສະຖາບັນການເງິນ (ຕໍ່)

ເງິນກູ້ຢືມຈາກສະຖາບັນການເງິນມີກຳນົດຊຳລະຄືນເມື່ອທວງຖາມ ມີອັດຕາດອກເບ້ຍ 8.75% ຕໍ່ປີ ໂດຍກູ້ຢືມໃນສະກຸນເງິນກີບ ຄ້ຳປະກັນໂດຍທີ່ດິນ ແລະ ອາຄານຜູ້ຖືຮຸ້ນ.

ໃນວັນທີ 14ມິຖຸນາ 2016, ບໍລິສັດເຊັ້ນສັນຍາໃໝ່ໃນການຂະຫຍາຍຂອບເຂດເງິນເບີກເກີນບັນຊີ ຈາກ 1.200 ລ້ານ ເປັນ 33.495 ລ້ານກີບ ກັບສະຖາບັນການເງິນຕ່າງປະເທດສາຂາໃນລາວໂດຍມີອັດຕາດອກເບ້ຍ 4% ຕໍ່ປີສຳລັບການສະໜັບສະໜູນການດຳເນີນງານ. ບໍລິສັດຂະຫຍາຍຂອບເຂດກຳນົດການປ່ອຍສິນເຊື່ອເງິນເບີກເກີນບັນຊີໂດຍມີດິນຂອງຜູ້ຖືຮຸ້ນເປັນຫຼັກຊັບຄ້ຳປະກັນ.

10. ສຳຮອງ

ສຳຮອງຕາມກົດໝາຍ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ຍອດຍົກມາ	2.906.968.288	2.092.819.578
ການເພີ່ມຂຶ້ນ	(380.755.809)	814.148.710
ຍອດເຫຼືອທ້າຍ	**2.526.212.479**	**2.906.968.288**

ເງິນສຳຮອງຕາມກົດໝາຍໄດ້ກຳນົດຕາມ ມາດຕາທີ່ 156 ໃນກົດໝາຍວ່ິສາຫະກິດ ຂອງ ສປປ ລາວ. ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງ ຂອງກຳໄລສຸດທິປະຈຳປີ ຖືກຕັ້ງໄວ້ເປັນສຳຮອງຕາມກົດໝາຍຈົນກ່ວາເງິນສຳຮອງດັ່ງກ່າວ ຈະຮອດ 50% ຂອງທຶນຈົດທະບຽນ.

ສຳຮອງອື່ນໆ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ຍອດຍົກມາ	2.656.968.288	1.842.819.578
ການເພີ່ມຂຶ້ນ	(380.755.809)	814.148.710
ຍອດເຫຼືອທ້າຍ	**2.276.212.479**	2.656.968.288

10. ສຳຮອງ

ສຳຮອງອື່ນໆ

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມ ນະໂຍບາຍຂອງທາງ ບໍລິສັດ ທີ່ໄດຮັບການຈົດທະບຽນກັບ ກະຊວງການເງິນ ສປປ ລາວ ໃນວັນທີ 22 ກັນຍາ 2015. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

11. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນ ວິສາມັນ ໃນວັນທີ 07 ເມສາ 2017, ຜູ້ຖືຮຸ້ນໄດ້ອະນຸມັດມະຕິປະກາດຈ່າຍເງິນປັນຜົນຈາກ ກຳໄລສະສົມໄດ້ຈັດສັນ ຫຼັງຈາກສຳຮອງຕາມກົດໝາຍ ແລະ ການຈັດສັນສຳຮອງອື່ນໆຂອງກຳໄລສຸດທິ ວັນທີ 1 ມັງກອນ 2016 ເຖິງວັນທີ 31 ທັນວາ 2016 ໃນຈຳນວນ 20 ກີບ ຕໍ່ ຮຸ້ນ ເປັນເງິນ ຈຳນວນ 3.256.594.838 ກີບ.

12. ລາຍຈ່າຍອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ໃນວັນທີ 1 ຕຸລາ 2012, ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ເພື່ອ ໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 24%. ຫຼັງຈາກໄດ້ລົງທະບຽນໃນຕະຫຼາດຫຼັກຊັບເປັນຕົ້ນໄປ, ບໍລິສັດ ຈະຕ້ອງຈ່າຍອາກອນກຳໄລ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 24% ນອກຈາກນີ້ ບໍລິສັດ ຍັງໄດ້ຮັບ ນະໂຍບາຍ ຫຼຸດອັດຕາອາກອນລາຍໄດ້ນັບແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບອີກ 5% ເປັນໄລຍະເວລາ 4 ປີ (ຈາກ ປີ 2015 ເຖິງ ປີ 2019) ໂດຍອີງຕາມດຳລັດຂອງປະທານປະເທດກ່ຽວກັບອາກອນລາຍໄດ້ຂອງ ບໍລິສັດ ໃນຕະຫຼາດ ຫຼັກຊັບ ເລກທີ 1/ປປທ, ລົງວັນທີ 28 ທັນວາ 2010.

ສຳລັບຮອບເວລາ 3 ເດືອນຕົ້ນປີ ສິ້ນສຸດວັນທີ 31 ມີນາ 2017 ບໍລິສັດໄດ້ບັນທຶກອາກອນລາຍໄດ້ຄ້າງຈ່າຍ ໃນອັດຕາ ປັດຈຸບັນ 19% ຂອງກຳໄລສຸດທິ ຫຼັງຈາກໄດ້ຄັດແກ້ລາຍຈ່າຍທີ່ບໍ່ສາມາດຫັກໄດ້ ແລະ ການບັນທຶກອື່ນໆໃນກົດໝາຍ ວ່າດ້ວຍສ່ວຍສາອາກອນກ່ຽວກັບ ພື້ນຖານການຄ້າງຮັບຄ້າງຈ່າຍ ຈຳນວນ 715 ລ້ານກີບ.

13. ກຳໄລຕໍ່ຮຸ້ນ

ໃນວັນທີ 31 ມີນາ 2017 ລາຍຮັບຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການແບ່ງປັນກຳໄລສຸດທິຂອງຜູ້ຖືຮຸ້ນຂອງ ບໍລິສັດ ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

	31 ມີນາ 2017 ກີບ
ຕົວສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ(ຮຸ້ນ)	165.000.000
ກຳໄລສຸດທິສຳລັບໄລຍະທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ)	3.256.594.838
ກຳໄລຕໍ່ຮຸ້ນ (ກີບ)	20

ເນື່ອງຈາກຕອນທີ່ບໍລິສັດຈົດທະບຽນ ລັດຖະບານຂອງ ສ ປ ປ ລາວບໍ່ໄດ້ກຳນົດໃຫ້ມີຂໍ້ມູນກ່ຽວກັບຈຳນວນຮຸ້ນ ແລະ ລາຄາຕໍ່ຮຸ້ນໃນໃບທະບຽນວິສາຫະກິດ ສະນັ້ນ,ຈຶ່ງບໍ່ສາມາດຄິດໄລ່ກຳໄລຕໍ່ຮຸ້ນສຳລັບເວລາ 3 ເດືອນຕົ້ນປີສິ້ນສຸດວັນທີ 31 ມີນາ 2017.

14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍ ສື່ກາງ, ການຄວບຄຸມ, ຫຼື ແມ່ນຄວບຄຸມໂດຍ, ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ, ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດ ອື່ນໆທີ່ກ່ຽວຂ້ອງກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ, ໂດຍກົງ ຫຼື ທາງອ້ອມ, ມີສິດໃນການລົງຄະແນນສຽງຂອງ ບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບ ບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງ ສາຍສຳພັນ ແລະ ບໍ່ພຽງ ແຕ່ຮູບແບບທາງດ້ານກົດໝາຍ.

ຈຳນວນ ແລະ ລັກສະນະຂອງຄວາມສຳຄັນຂອງລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ.

14.1 ລາຍຮັບ ແລະ ລາຍຈ່າຍ

	31 ມີນາ 2017 ກີບ	31 ມີນາ 2016 ກີບ
ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	1.725.602.219	3.404.563.309
ລາຍຈ່າຍດອກເບ້ຍ	263.757.332	21.450.502
ຄ່າເຊົ່າ	556.213.748	-
ລວມ	**2.545.573.299**	**3.426.013.811**

ໃນການຊື້ສິນຄ້າສ່ວນຫຼາຍແມ່ນຊື້ຈາກ ບໍລິສັດ ສະຫຍາມ ໂກຣໂບເຣ້ຳ ເຊິ່ງເປັນພາກສ່ວນທີ່ກ່ຽວຂ້ອງກັບບໍລິສັດ. ລາຍຈ່າຍຄ່າເຊົ່າແມ່ນສຳລັບດິນ ແລະ ອາຄານ ເຊົ່າຈາກຂາຮຸ້ນຫຼັກເພື່ອສະໜັບສະໜຸນການດຳເນີນງານ. ລາຍຈ່າຍໃນການເຊົ່າທີ່ດິນ ແລະ ຕຶກອາຄານ ແກ່ຜູ້ຖືຮຸ້ນໃຫຍ່ເພື່ອໃຊ້ໃນການດຳເນີນງານ. ຄ່າເຊົ່າແມ່ນຕົກລົງເຫັນດີທັງສອງຝ່າຍ (ບົດອະທິບາຍຂໍ້ 15).

14. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

14.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ

	31 ມີນາ 2017 ກີບ	ກວດສອບ 31 ທັນວາ 2016 ກີບ
ເງິນຈ່າຍລ່ວງໜ້າສຳລັບການກໍ່ສ້າງ	-	-
ບັນຊີໜີ້ຕ້ອງສິ່ງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 8)	16.961.203	-
ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງ	-	-

14.3 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນ ດັ່ງຕໍ່ໄປນີ້:

	31 ມີນາ 2017 ກີບ	30 ມີນາ 2016 ກີບ
ສຳລັບ ໄລຍະສາມເດືອນທ້າຍ	446.100.000	387.000.000
		-

15. ພາລະຜູກພັນ ແລະ ການເຄື່ອນໄຫວທີ່ມີຄວາມສຳຄັນ

ພາລະຜູກພັນຄ່າເຊົ່າໃນການດຳເນີນງານ, ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້. ຊຶ່ງໄລຍະການໃຫ້ເຊົ່າແມ່ນ 2 ຫາ 3 ປີ, ແລະ ສ່ວນໃຫຍ່ຂອງສັນຍາເຊົ່ານີ້ແມ່ນສາມາດຕໍ່ໄດ້ເມື່ອສັນຍາເກົ່າໝົດ.

	30 ມີນາ 2017 ກີບ	31 ທັນວາ 2016 ກີບ
ບໍ່ເກີນ 1 ປີ	123.502.000	5 .308.372.122
1 - 5 ປີ	9.306.862.365	17.753.992.061
ບໍ່ເກີນ 5 ປີ	-	-
ຍອດເຫຼືອທ້າຍ 31 ມີນາ 2016	9.430.364.365	23.062.364.183

16. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງການລາຍງານ

ການເປີດສາຂາໃໝ່

ບໍລິສັດ ໄດ້ເປີດສາຂາໃໝ່ ສາຂາໂຊກໃຫຍ່ ທີ່ ບ້ານ ໂຊກໃຫຍ່ ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງ ໃນວັນທີ 30 ມັງກອນ 2017